ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 068 /ທຄຕລ 2016
ນະຄອນຫຼວງວຽງຈັນ, ວັນທີ: 26/09/2016

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ ທຄຕລ

- ອີງຕາມການສະເໜີຂອງ ທຄຕລ ສຳນັກງານໃຫຍ່ ສະບັບເລກທີ 011/ທຄຕລ.2016 ລົງວັນທີ **27/04/2016,**
- ອີງຕາມແຈ້ງຕອບຂອງກົມຈັດຕັ້ງ ແລະ ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 143/ກຈພ ລົງວັນທີ **06/05/2016,**
- ອີງຕາມການເຫັນດີເປັນເອກະພາບຂອງສະພາບໍລິຫານ ທຄຕລ ຄັ້ງວັນທີ **19/05/2016** ແລະ ຄັ້ງວັນທີ **20/05/2016.**

**ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ :**

**ມາດຕາ 1:** ເຫັນດີຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ບົວວັນ ສີມະລີວົງ** ຮອງຜູ້ອຳນວຍການໃຫຍ່ ທະນາຄານຮ່ວມທຸລະກິດລາວ-ຫວຽດ ໃຫ້ເປັນ ຮອງຜູ້ອຳນວຍການໃຫຍ່ ທຄຕລ, ນັບແຕ່ວັນທີ 01/11/2016 ເປັນຕົ້ນໄປ.

**ມາດຕາ 2:** ກ່ອນຈະໄປຮັບໜ້າທີ່ວຽກງານໃໝ່ ໃຫ້ມອບວຽກທີ່ຕົນຮັບຜິດຊອບປະຈຸບັນ ຄືນໃຫ້ບ່ອນທີ່ຕົນສັງກັດຢູ່ຢ່າງເປັນລາຍລັກອັກສອນ.

**ມາດຕາ 3:** ມອບໃຫ້ ຄະນະອຳນວຍການ, ພະແນກຈັດຕັ້ງ-ພະນັກງານ, ພະແນກຫ້ອງການບໍລິຫານ-ການເງິນ, ທຸກພາກສ່ວນທີ່ກ່ຽວຂ້ອງ, ທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ອຳນວຍການໃຫຍ່**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຊົງ ຈັນທະຈັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຊີວະປະຫວັດຫຍໍ້ພະນັກງານ ທຄຕລ



## I. ສະພາບທົ່ວໄປ:

- ຊື່ ແລະ ນາມສະກຸນ: **ທ່ານ ບົວວັນ ສີມະລີວົງ**
- ວັນ ເດືອນ ປີເກີດ: 13/07/1960
- ເກີດທີ່ບ້ານ: ບ້ານວຽງຄວັນ, ເມືອງ ແປກ, ແຂວງຊຽງຂວາງ
- ບ້ານຢູ່ປັດຈຸບັນ: ບ້ານໂພນທັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ: **ຮອງຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.**
- ວັນ ເດືອນ ປີ ເຂົ້າການ: 11/02/1984 ປີການ: 32 ປີ
- ພາສາຕ່າງປະເທດທີ່ຮູ້: ຫວຽດນາມ ໃນລະດັບດີຫຼາຍ.

## II. ປະຫວັດການສຶກສາ.

- ລະດັບວິຊາສະເພາະ: ປະລິນຍາໂທດ້ານການເງິນ-ການທະນາຄານ ຈາກ ສທດ ໃນໂຄງການຮ່ວມມືກັບ ສ.ສ ຫວຽດນາມ
- ລະດັບທິດສະດີການເມືອງ: ຊັ້ນກາງ

## III. ສະພາບການເຄື່ອນໄຫວຜ່ານມາ ຈົນເຖິງປະຈຸບັນ:

- 11/2016 - ປັດຈຸບັນ ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- 12/2005 – 10/2016 ເປັນຮອງຜູ້ອຳນວຍການໃຫຍ່ ທະນາຄານຮ່ວມທຸລະກິດລາວ-ຫວຽດ.
- 06/1999 - 11/2005 ຖືກແຕ່ງຕັ້ງເປັນຮອງຫົວໜ້າສາຂາຮ່າໂນຍ ທະນາຄານຮ່ວມທຸລະກິດລາວ-ຫວຽດ
- 02/1990 - 06/1999 ເຂົ້າເປັນພະນັກງານ ທຄຕລ ໃນຕຳແໜ່ງ ວິຊາການພະແນກສິນເຊື່ອ
- 01/1989 - 02/1990 ພະນັກງານຢູ່ບໍລິສັດສະໜອງວັດຖຸ ກຳແພງນະຄອນ
- 04/1986 - 12/1988 ພະນັກງານວິຊາການຢູ່ທະນາຄານແຂວງວຽງຈັນ
- 02/1984 - 03/1986 ພະນັກງານວິຊາການຢູ່ທະນາຄານພິເສດ